ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາປະຊາຊົນແຂວງໄຊຍະບູລີ

ເລກທີ 71 /ສພຂ.ຊຍ

ໄຊຍະບູລີ, ວັນທີ 31.12.2021

# ມະຕິ
# ກອງປະຊຸມສະພາປະຊາຊົນແຂວງໄຊຍະບູລີ
# ວ່າດ້ວຍການຮັບຮອງເອົາບົດລາຍງານຂອງອົງການປົກຄອງແຂວງ
# ກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມຂອງແຂວງ ໄລຍະ 9 ເດືອນ, ຄາດຄະເນໝົດປີ 2021 ແລະ ທິດທາງແຜນການ ປີ 2022

- ອີງຕາມ ລັດຖະທໍາມະນູນແຫ່ງ ສປປ ລາວ ສະບັບປັບປຸງ ປີ 2015 ມາດຕາ 77 ສິດ ແລະ ໜ້າທີ່ ຂອງສະພາປະຊາຊົນຂັ້ນແຂວງ;
- ອີງຕາມ ກົດໝາຍວ່າດ້ວຍ ການປັບປຸງບາງມາດຕາຂອງກົດໝາຍວ່າດ້ວຍສະພາແຫ່ງຊາດ ແລະ ກົດໝາຍວ່າດ້ວຍສະພາປະຊາຊົນຂັ້ນແຂວງ ສະບັບເລກທີ 82/ສພຊ, ລົງວັນທີ 30 ມິຖຸນາ 2020, ມາດຕາ 12 ຂໍ້ 2.1 ແລະ ມາດຕາ 59 ຂໍ້ 1;
- ອີງຕາມ ບົດລາຍງານຂອງອົງການປົກຄອງແຂວງ ລົງວັນທີ 29 ທັນວາ 2022.

ຜ່ານການຄົ້ນຄວ້າ, ປະກອບຄໍາເຫັນ ແລະ ພິຈາລະນາ ຢ່າງກວ້າງຂວາງ ດ້ວຍຄວາມຮັບຜິດຊອບສູງຕໍ່ໜ້າທີ່ການເມືອງຂອງ ສະມາຊິກສະພາປະຊາຊົນແຂວງ ໃນຖານະເປັນຕົວແທນແຫ່ງສິດຜົນປະໂຫຍດສູງສຸດຂອງປະຊາຊົນບັນດາເຜົ່າ ຕໍ່ບົດລາຍງານຂອງອົງການປົກຄອງແຂວງກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມຂອງແຂວງ ໄລຍະ 9 ເດືອນ, ວຽກຈຸດສຸມ 3 ເດືອນທ້າຍປີ 2021 ແລະ ທິດທາງແຜນການປະຈໍາປີ 2022 ໃນກອງປະຊຸມສະໄໝສາມັນ ເທື່ອທີ 2 ຂອງ ສະພາປະຊາຊົນແຂວງ ຊຸດທີ II.

**ກອງປະຊຸມຕົກລົງ:**

**ມາດຕາ 1 ຮັບຮອງເອົາບົດລາຍງານການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມຂອງແຂວງ ໄລຍະ 9 ເດືອນ ຄາດຄະເນໝົດ ປີ 2021**

ກອງປະຊຸມຍ້ອງຍໍຊົມເຊີຍ ແລະ ເຫັນດີເປັນເອກະພາບຕໍ່ ການລາຍງານ ຂອງອົງການປົກຄອງແຂວງກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມຂອງແຂວງ ໄລຍະ 9 ເດືອນ, ຄາດຄະເນໝົດ ປີ 2021 ຊຶ່ງໄດ້ຍົກໃຫ້ເຫັນຄວາມພະຍາຍາມຂອງອົງການປົກຄອງແຂວງ ໃນການສູ້ຊົນຜ່ານຜ່າຄວາມຫຍຸ້ງຍາກ ແລະ ສິ່ງທ້າທາຍຫຼາຍປະການ ໃນການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມຂອງແຂວງ ປະຈໍາປີ 2021 ໃນທ່າມກາງຜົນກະທົບຈາກໄພທໍາມະຊາດ ແລະ ການແຜ່ລະບາດຂອງພະຍາດ ໂຄວິດ-19 ຢູ່ພາຍໃນແຂວງ ໄດ້ສົ່ງຜົນກະທົບຕໍ່ການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມຂອງແຂວງພວກເຮົາໃນປີ 2021, ແຕ່ເຖິງ

ແນວໃດກໍ່ຕາມ ອົງການປົກຄອງແຂວງກໍ່ສາມາດຈັດຕັ້ງປະຕິບັດບັນດາຄາດໝາຍທີ່ວາງໄວ້ ຫຼາຍຄາດໝາຍສາມາດບັນລຸຕາມແຜນ ແລະ ຄາດໝາຍຈຳນວນໜຶ່ງບັນລຸໄດ້ເກີນແຜນທີ່ວາງໄວ້ ເຮັດໃຫ້ເສດຖະກິດສືບຕໍ່ຂະຫຍາຍຕົວຢ່າງຕໍ່ເນື່ອງ, ເສດຖະກິດມະຫາພາກມີສະຖຽນລະພາບ ແລະ ສັງຄົມມີຄວາມສະຫງົບໃດຍພື້ນຖານ.

ກອງປະຊຸມຮັບຮອງ ແລະ ສະເໜີໃຫ້ອົງການປົກຄອງແຂວງ ເອົາໃຈໃສ່ຊີ້ນຳບັນດາຂະແໜງການຂອງແຂວງ, ເມືອງ ສືບຕໍ່ສູ້ຊົນຈັດຕັ້ງປະຕິບັດບັນດາຄາດໝາຍ ໃຫ້ບັນລຸຕາມແຜນຄາດຄະເນໝົດປີ 2021 ເປັນຕົ້ນລວມຍອດຜະລິດຕະພັນພາຍໃນ (GDP) ໃຫ້ໄດ້ 11,262 ຕື້ກີບ, ແຜນລາຍຮັບ ໃຫ້ໄດ້ 1.046,93 ຕື້ກີບ, ຄຸ້ມຄອງລາຍຈ່າຍ 531,19 ຕື້ກີບ ແລະ ສູນກາງດຸ່ນດ່ຽງໃຫ້ແຂວງ 316,53 ຕື້ກີບ, ສູ້ຊົນການສັກວັກຊີນປ້ອງກັນພະຍາດ ໂຄວິດ-19ໃຫ້ໄດ້ 50% ຂອງປະຊາກອນທັງໝົດທົ່ວແຂວງ ເພື່ອຮັບປະກັນການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມຂອງແຂວງ ປີ 2022 ໃຫ້ໄປຕາມແຜນການທີ່ກຳນົດໄວ້.

**ມາດຕາ 2 ຮັບຮອງເອົາທິດທາງແຜນພັດທະນາເສດຖະກິດ-ສັງຄົມຂອງແຂວງ ປີ 2022**

ກອງປະຊຸມເຫັນດີເປັນເອກະພາບຕໍ່ບັນດາເນື້ອໃນທີ່ກຳນົດໄວ້ຢູ່ຈຸດໝາຍລວມ, ທິດທາງ, ຄາດໝາຍ ແລະ ວຽກຈຸດສຸມພັດທະນາ ປີ 2022 ຕາມການສະເໜີຂອງອົງການປົກຄອງແຂວງ ພ້ອມທັງຮັບຮອງເອົາບັນດາຄາດໝາຍສູ້ຊົນແຕ່ລະດ້ານ ດັ່ງນີ້:

**1. ຄາດໝາຍດ້ານເສດຖະກິດມະຫາພາກ**

**1.1 ການເຕີບໂຕເສດຖະກິດມະຫາພາກ**

ອັດຕາການເຕີບໂຕເສດຖະກິດ ຂະຫຍາຍຕົວໃນລະດັບ 4,8% ຂຶ້ນໄປ ແລະ ລວມຍອດຜະລິດຕະພັນພາຍໃນ ມູນຄ່າ 11,593 ຕື້ກີບ, ສະເລ່ຍຕໍ່ຫົວຄົນເທົ່າກັບ 3,095 ໂດລາສະຫະລັດ, ໂຄງປະກອບເສດຖະກິດກວມເອົາໃນອັດຕາສ່ວນ ດັ່ງນີ້:

- ຂະແໜງກະສິກຳ ເພີ່ມຂຶ້ນຫຼາຍກວ່າ 3,0% ກວມເອົາ 26% ຂອງ GDP;
- ຂະແໜງອຸດສາຫະກຳ ເພີ່ມຂຶ້ນ 7,4% ກວມເອົາ 39% ຂອງ GDP;
- ຂະແໜງບໍລິການ ເພີ່ມຂຶ້ນ 3,7% ກວມເອົາ 36 ຂອງ GDP.

**1.2 ດ້ານງົບປະມານ**

- ດ້ານລາຍຮັບ: ຄາດໝາຍລາຍຮັບເຂົ້າງົບປະມານທັງໝົດໃຫ້ໄດ້ 1.125,37 ຕື້ກີບ, ໃນນີ້ ລາຍຮັບສູນກາງ 890,86 ຕື້ກີບ ແລະ ລາຍຮັບພາຍໃນ 234,51 ຕື້ກີບ;
- ດ້ານລາຍຈ່າຍ: ຄາດຄະເນລາຍຈ່າຍທັງໝົດຢູ່ໃນລະດັບ 472,90 ຕື້ກີບ (ບໍ່ລວມລາຍຈ່າຍການລົງທຶນຂອງລັດ);
- ຂາດດຸ່ນງົບປະມານ: ຄາດຄະເນການຂາດດຸ່ນງົບປະມານ 238,39 ຕື້ກີບ.

**1.3 ດ້ານແຫຼ່ງທຶນເພື່ອການພັດທະນາ**

ຄວາມຕ້ອງການທຶນລວມທັງໝົດ 2.898 ຕື້ກີບ ເທົ່າກັບ 25% ຂອງ GDP ໃນນີ້:

- ການລົງທຶນຂອງລັດ ປະມານ 144,9 ຕື້ກີບ ກວມເອົາ 5% ຂອງຄວາມຕ້ອງການລົງທຶນທັງໝົດ;
- ການຊ່ວຍເຫຼືອລ້າທາງການເພື່ອການພັດທະນາ (ODA) ປະມານ 347,76 ຕື້ກີບ ກວມເອົາ 12% ຂອງຄວາມຕ້ອງການລົງທຶນທັງໝົດ;

- ການລົງທຶນຂອງເອກະຊົນພາຍໃນ ແລະ ຕ່າງປະເທດ ປະມານ 1.738,8 ຕື້ກີບ ກວມເອົາ 60% ຂອງຄວາມຕ້ອງການລົງທຶນທັງໝົດ
- ສິນເຊື່ອຂອງທະນາຄານ ປະມານ 666,54 ຕື້ກີບ ກວມເອົາ 23% ຂອງຄວາມຕ້ອງການລົງທຶນທັງໝົດ;

**2. ຄາດໝາຍດ້ານເສດຖະກິດບັນດາຂະແໜງການ**

**2.1 ກະສິກຳ ແລະ ປ່າໄມ້**

- ຜະລິດເຂົ້າ ໃຫ້ໄດ້ 187.000 ໂຕນ;
- ຜະລິດພືດສະບຽງອາຫານ ໃຫ້ໄດ້ 178.000 ໂຕນ;
- ປູກພືດເປັນສິນຄ້າ ໃຫ້ໄດ້ 1.600.000 ໂຕນ;
- ການຜະລິດ ຊີ້ນ, ໄຂ່, ປາ ໃຫ້ໄດ້ 23.187 ໂຕນ;
- ການຜະລິດສັດເປັນສິນຄ້າ ທັງພາຍໃນ ແລະ ສົ່ງອອກໄປຕ່າງແຂວງ ໄດ້ 147.500 ໂຕ, ໃນນີ້ ຜະລິດເປັນສິນຄ້າພາຍໃນ 115.500 ໂຕ ແລະ ການສົ່ງສັດອອກໄປຕ່າງແຂວງ 32.000 ໂຕ.

**2.2 ອຸດສາຫະກຳ ແລະ ການຄ້າ**

- ມູນຄ່າການສົ່ງອອກ ໃຫ້ບັນລຸ 45 ລ້ານໂດລາສະຫະລັດ;
- ມູນຄ່າການນຳເຂົ້າ ປະມານ 44 ລ້ານໂດລາສະຫະລັດ;
- ສ້າງມູນຄ່າການຜະລິດອຸດສາຫະກຳ ແລະ ຫັດຖະກຳ ໃຫ້ບັນລຸ 235,86 ຕື້ກີບ
- ສ້າງມູນຄ່າການຈຳໜ່າຍຜະລິດຕະພັນດ້ານອຸດສາຫະກຳ ແລະ ຫັດຖະກຳ ໃຫ້ບັນລຸ 274,30 ຕື້ກີບ;
- ສ້າງມູນຄ່າການຈໍລະຈອນສິນຄ້າ (ຂາຍຍົກ-ຂາຍຍ່ອຍ ແລະ ບໍລິການ) ໃຫ້ບັນລຸ 140 ຕື້ກີບ;
- ສ້າງຄວາມເຂັ້ມໃຫ້ຫົວໜ່ວຍ SMEs ໃຫ້ໄດ້ກາໝາຍ ODOP ຢູ່ 3 ເມືອງ ໂດຍເນັ້ນໃສ່ການຊຸກຍູ້ ສົ່ງເສີມ ເຄື່ອງຫັດຖະກຳແຜ່ນແພ ຢູ່ເມືອງຄອບ; ປຸງແຕ່ງຊາ ແລະ ເຫຼົ້າໝາກເດືອຍ ຢູ່ເມືອງຊຽງຮ່ອນ ແລະ ເຂົ້າຣາງເມືອງພຽງ.

**2.3 ພະລັງງານ ແລະ ບໍ່ແຮ່**

- ສູ້ຊົນຈັດຕັ້ງປະຕິບັດ ໂຄງການກໍ່ສ້າງເຂື່ອນໄຟຟ້າ ນໍ້າຮຸ່ງ 1 ໃຫ້ສຳເລັດ ແລະ ດຳເນີນການຜະລິດຂາຍໄຟເປັນທາງການ ພາຍໃນປີ 2022;
- ຄົ້ນຄວ້າ, ກວດກາ ແລະ ປະເມີນຄືນ ບັນດາໂຄງການສຶກສາຄວາມເປັນໄປໄດ້ເບື້ອງຕົ້ນສຳລັບໂຄງການເຂື່ອນໄຟຟ້າຂະໜາດນ້ອຍ ທີ່ໄດ້ອະນຸມັດຜ່ານມາ ໃຫ້ສຳເລັດ 10 ໂຄງການ, ເພື່ອຄັດເລືອກເອົາໂຄງການທີ່ມີຄວາມຄືບໜ້າ ແລະ ມີເງື່ອນໄຂຄົບຖ້ວນ ໄດ້ກ້າວເຂົ້າສູ່ໄລຍະສຶກສາຄວາມເປັນໄປໄດ້ຂັ້ນສຸດທ້າຍ ຫລື ຂັ້ນຕອນພັດທະນາ;
- ສືບຕໍ່ຊຸກຍູ້ ສົ່ງເສີມໂຄງການເຂື່ອນໄຟຟ້າຂະໜາດນ້ອຍໃຫ້ໄດ້ເຊັນສັນຍາພັດທະນາໂຄງການ ຈຳນວນ 02 ໂຄງການ;
- ສູ້ຊົນໃຫ້ບ້ານມີໄຟຟ້ານຳໃຊ້ເພີ່ມຂຶ້ນໃນລະບົບ 01 ບ້ານ ແລະ ຄອບຄົວຊົມໃຊ້ໃຫ້ໄດ້ 1.000 ຄອບຄົວ;
- ຊຸກຍູ້, ສົ່ງເສີມ ການຜະລິດພະລັງງານໄຟຟ້າ ໃຫ້ໄດ້ 183,93 ລ້ານກິໂລວັດໂມງ, ເປັນມູນຄ່າ 116,32 ຕື້ກີບ ແລະ ຈຳໜ່າຍໄຟຟ້າພາຍໃນ ໃຫ້ໄດ້ 163,84 ລ້ານກິໂລວັດໂມງ, ເປັນມູນຄ່າ 105,73 ຕື້ກີບ;
- ຊຸກຍູ້, ສົ່ງເສີມ ການຜະລິດ ແລະ ຈຳໜ່າຍ ແຮ່ທາດ ຫີນປູນ ໃຫ້ໄດ້ 400.000 ແມັດກ້ອນ, ເປັນມູນຄ່າ 24 ຕື້ກີບ, ໃນນັ້ນ: ຈຳໜ່າຍຫີນປູນພາຍໃນ ປະຕິບັດໃຫ້ໄດ້ 100.000 ແມັດກ້ອນ, ມູນຄ່າ 9 ຕື້ກີບ ແລະ ສົ່ງອອກໄປຕ່າງປະເທດ ປະຕິບັດໃຫ້ໄດ້ 300.000 ແມັດກ້ອນ, ມູນຄ່າ 15 ຕື້ກີບ;

- ສືບຕໍ່ສ້າງນິຕິກຳໃຕ້ກົດໝາຍກ່ຽວກັບການຄຸ້ມຄອງວຽກງານພະລັງງານ ແລະ ບໍ່ແຮ່ ໃຫ້ໄດ້ຈຳນວນ 01 ສະບັບ;

**2.4 ໂຍທາທິການ ແລະ ຂົນສົ່ງ**

- ປູຢາງອັດສະຟານ ພາຍໃນເທດສະບານແຂວງ ຈຳນວນ 10 ສັນຍາ ແລະ ສ້ອມແປງທາງຫຼວງແຫ່ງຊາດ ຈຳນວນ 7 ສັນຍາ;
- ແກ້ໄຂສະພາບເສັ້ນທາງເພື່ອສ້ອມແປງ ຟື້ນຟູຫຼັງລະດູຝົນ ປີ 2021 ແລະ ຕິດຕາມ ສະພາບເສັ້ນທາງວຽກ ສຸກເສີນທີ່ອາດຈະເກີດຂຶ້ນໃນ ປີ 2022;
- ປັກແລວການສ້ອມແປງຕະຝັ່ງເຈື່ອນຈຸດ ບ້ານເໜືອງແພ່ ແລະ ຈຸດບ້ານນາຂ່າ ເພື່ອໃຫ້ໄດ້ລົງມື ສ້ອມແປງ;
- ສືບຕໍ່ຟື້ນຟູ-ສ້ອມແປງປ້ອງກັນຕາຝັ່ງຕ້ານເຈື່ອນທີ່ໄດ້ຮັບຜົນກະທົບຈາກ ໄພພິບັດນ້ຳຖ້ວມເທດສະບານ ເມືອງໄຊຍະບູລີ, ລວງຍາວ 840 ແມັດ, ຈຳນວນ 10 ຈຸດ (ນ້ຳຮຸ່ງ).
- ສ້ອມແປງຄືນຈຸດທີ່ຈີກວາງທໍ່ນ້ຳປະປາຂ້າມທາງ ຂອງໂຄງການຂະຫຍາຍນ້ຳປະປາສຸຂະພິບານ ຈຳນວນ 24 ຈຸດ;
- ຮ່າງແຜນຍຸດທະສາດ ແລະ ວິໄສທັດ ວຽກງານນ້ຳປະປາ ທົ່ວແຂວງໄຊຍະບູລີ (ປີ 2021 - 2030);
- ຮັບປະກັນຜະລິດນ້ຳປະປາໃຫ້ສະອາດ (ຮັບປະກັນບໍ່ໃຫ້ນ້ຳຂຸ່ນ) ແລະ ບໍລິການຮັບໃຊ້ປະຊາຊົນ ໃຫ້ ພຽງພໍ.

**2.5 ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ**

- ຜັນຂະຫຍາຍແຜນຈັດສັນທີ່ດິນ, ຄຸ້ມຄອງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ແບບ ຮອບດ້ານຂອງແຂວງ ໃຫ້ໄດ້ 11 ເມືອງ;
- ຈັດສັນທີ່ດິນຂັ້ນເມືອງ ໃຫ້ໄດ້ 2 ເມືອງ, ຈັດສັນທີ່ດິນຂັ້ນບ້ານ ໃຫ້ໄດ້ 40 ບ້ານ, ສ້າງສະຖານີອ້າງອີງ ທາງດ້ານພູມສາດແບບຕໍ່ເນື່ອງ (ຈຸດ cors) ໃຫ້ໄດ້ 1 ຈຸດ;
- ຂຶ້ນທະບຽນອອກໃບຕາດິນ ໃຫ້ໄດ້ 8.000 ຕອນ, ເກັບກຳຂໍ້ມູນໂຕເລກສຳມະໂນພາສີທີ່ດິນ ໃຫ້ໄດ້500 ຕອນ ແລະ ປະເມີນຄືນການຈັດສັນທີດິນຂັ້ນບ້ານໃຫ້ໄດ້ 64 ບ້ານ;
- ສ້າງລະບົບກົນໄກຄຸ້ມຄອງຕົວເມືອງຂຽວ, ສະອາດ, ງາມຕາ ທົ່ວແຂວງ ໃຫ້ໄດ້ 40 ບ້ານ, ຊຸກຍູ້ ແລະ ເຜີຍແຜ່ຄູ່ມືການສ້າງບ້ານຕົວເມືອງຂຽວ, ສະອາດງາມຕາ ໃນຂອບເຂດທົ່ວແຂວງ ໃຫ້ໄດ້ 6 ເມືອງ, ປັບປຸງສະໜາມຂີ້ເຫຍື້ອ ໃຫ້ໄດ້ 1 ແຫ່ງ ແລະ ອອກໃບຢັ້ງຢືນສິ່ງແວດລ້ອມ ໃຫ້ໄດ້ 420 ຫົວໜ່ວຍ;
- ສ້າງແຜນຄຸ້ມຄອງອ່າງຮັບນ້ຳທີ່ເປັນບູລິມະສິດໃຫ້ໄດ້ 1 ອ່າງ, ຕິດຕາມກວດກາຄຸນນະພາບນ້ຳ ໃຫ້ໄດ້ 28 ຈຸດ, ອອກໃບອະນຸຍາດການນຳໃຊ້ນ້ຳ ແລະ ຊັບພະຍາກອນນ້ຳ ໃຫ້ໄດ້ 30 ຫົວໜ່ວຍ, ຂະຫຍາຍຕາ ໜ່າງສະຖານີອຸຕຸນິຍົມ ໃຫ້ໄດ້ 1 ແຫ່ງ ແລະ ສ້າງຫຼາວັດແທກນໍ້ເຝົ້າລະວັງໄພ ໃຫ້ໄດ້ 2 ຈຸດ ແລະ ປັບປຸງ ຖານຂໍ້ມູນການນຳໃຊ້ນ້ຳໃຕ້ດິນ ແລະ ນ້ຳໜ້າດິນ ໃຫ້ໄດ້ 2 ເມືອງ;

**2.6 ເຕັກໂນໂລຊີ ແລະ ການສື່ສານ**

- ຊຸກຍູ້ ສົ່ງເສີມ, ໂຄສະນາເຜີຍແຜ່ ແລະ ນຳພາບັນດາຫ້ອງການລັດ ແລະ ຂະແໜງການຕ່າງໆ ໃຫ້ຫັນມາ ນຳໃຊ້ບໍລິການລະບົບບໍລິຫານລັດດີຈີຕ້ອນຢ່າງກ້ວາງຂວາງ ເພື່ອຫັນເປັນທັນສະໄໝ ເປັນຕົ້ນລະບົບເຄືອ ຂ່າຍຂອງພາກລັດ, ກອງປະຊຸມທາງໄກ (Video Conference), e-Office, Email, G-chat ແລະ ອື່ນໆ;

- ສ້າງເວັບໄຊຂອງພາກລັດ (G-web) ໃຫ້ບັນດາພະແນກການ, ອົງການ, ກົມກອງ ແລະ ບັນດາເມືອງ ທີ່ມີເງື່ອນໄຂ ໃຫ້ໄດ້ 03 ເວັບໄຊ;
- ຂະຫຍາຍພື້ນຖານໂຄງລ່າງ ດ້ານໂທລະຄົມມະນາຄົມ ເຂົ້າສູ່ເຂດຊຸມຊົນ ແລະ ເຂດຫ່າງໄກ ບ່ອນທີ່ມີເງື່ອນໄຂ ເຊັ່ນ: ຂະຫຍາຍສາຍກາບໄຍແກ້ວ ໃຫ້ໄດ້ 391 Km, ຂະຫຍາຍ ສະຖານີໂທລະສັບ ໃຫ້ໄດ້ 39 ສະຖານີ, ຂະຫຍາຍໂທລະສັບຕັ້ງໂຕະແບບມີສາຍ (074) ໃຫ້ໄດ້ 24 ເລກໝາຍ, ຂະຫຍາຍໂທລະສັບເບີ (030) ໃຫ້ໄດ້ 16.060 ເລກໝາຍ, ຈຳໜ່າຍເບີມືຖື (2G, 3G, 4G) ໃຫ້ໄດ້ 53.056 ເລກໝາຍ, ຈຳໜ່າຍ ເບີອິນເຕີເນັດ (ຊິມເນັດ) ໃຫ້ໄດ້ 53.000 ເລກໝາຍ, ຂະຫຍາຍ ອິນເຕີເນັດ (User) ໃຫ້ໄດ້ 1.596 ເລກໝາຍ;

**3. ຄາດໝາຍດ້ານວັດທະນະທຳ-ສັງຄົມ**

**3.1 ຄາດໝາຍຂະແໜງສຶກສາທິການ ແລະ ກິລາ: ມີ 15 ຄາດໝາຍ ແລະ 19 ຕົວຊີ້ບອກ**

- ອັດຕາເຂົ້າຮຽນຂອງເດັກ 5 ປີ ໃຫ້ໄດ້ 97,5%;
- ອັດຕາເຂົ້າຮຽນໃໝ່ລວມ ປ.1 ໃຫ້ໄດ້ 101%;
  + ອັດຕາເຂົ້າໃໝ່ສຸດທິ ປ.1 ໃຫ້ໄດ້ຫຼາຍກວ່າ 99%;
- ອັດຕາເຂົ້າຮຽນສຸດທິຊັ້ນປະຖົມ (6-10 ປີ) ໃຫ້ໄດ້ຫຼາຍກວ່າ 99%;
  + ອັດຕາເຂົ້າຮຽນໃໝ່ລວມ ປ.5 ໃຫ້ໄດ້ 101%;
- ອັດຕາປະລະຂັ້ນ ປ.1 ໃຫ້ຍັງເຫຼືອ 1,5%;
- ອັດຕາຈົບຊັ້ນປະຖົມ (ອັດຕາເລື່ອນຂັ້ນ-ຈົບຊັ້ນ) ໃຫ້ໄດ້ 96,8%;
  + ອັດຕາຄ້າງຫ້ອງຊັ້ນປະຖົມໃຫ້ຍັງເຫຼືອ 2%;
- ອັດຕາເລື່ອນຊັ້ນ ປ.5 ຂຶ້ນ ມ.1 ( ທຽບໃສ່ນັກຮຽນຕົ້ນປີ ປ.5 ) 91%;
- ດັດສະນີຄວາມສະເໝີພາບຍິງ-ຊາຍຂອງອັດຕາເລື່ອນຊັ້ນ ປ.5 ຫາ ມ.1 ຢູ່ໃນລະຫວ່າງ (0,97-1,03);
- ອັດຕາປະລະຊັ້ນປະຖົມໃຫ້ຍັງເຫຼືອ 1,1%;
- ອັດຕາເຂົ້າຮຽນລວມມັດທະຍົມຕອນຕົ້ນໃຫ້ໄດ້ 86%;
  + ອັດຕາເຂົ້າຮຽນລວມມັດທະຍົມຕອນປາຍໃຫ້ໄດ້ 52%;
- ອັດຕາເຂົ້າຮຽນໃໝ່ລວມ ມ.4 ໃຫ້ໄດ້ 78%;
- ອັດຕາປະລະມັດທະຍົມຕອນຕົ້ນ ໃຫ້ຍັງເຫຼືອ 6%;
- ປະຊາກອນໜຸ່ມ ແລະ ຜູ້ປະລະການຮຽນ ໃຫ້ໄດ້ບຳລຸງຜ່ານການສຶກສານອກໂຮງຮຽນ ແລະ ຝຶກອົບຮົມວິຊາຊີບ 1.120 ຄົນ;
- ຄູຊັ້ນປະຖົມ ແລະ ຊັ້ນມັດທະຍົມສຶກສາ ໃຫ້ໄດ້ຮັບການຝຶກອົບຮົມ 18% ຂອງຈຳນວນຄູສອນທັງໝົດ;
- ນັກຮຽນທີ່ຮຽນຈົບຊັ້ນມັດທະຍົມຕອນຕົ້ນໄດ້ເຂົ້າຮຽນຕໍ່ໃນສາຍອາຊີວະສຶກສາ ແລະ ອົບຮົມວິຊາຊີບ ໃຫ້ໄດ້ 2%;
- ສົ່ງເສີມໃຫ້ມວນຊົນທຸກເພດ, ທຸກໄວໄດ້ເຂົ້າຮ່ວມການຫັດກາຍຍະບໍລິຫານ, ການອອກກຳລັງກາຍ ແລະ ການຫຼິ້ນກິລາ ເຂົ້າຮ່ວມການສ້າງຂະບວນເພື່ອສຸຂະພາບເຂົ້າຮ່ວມການສ້າງຂະບວນການເຄື່ອນໄຫວ

ກິດຈະກຳການແຂ່ງຂັນກິລາປະຈຳປີ, ກິລາບຸນປະເພນີ ແລະ ກິລາບຸນວັນສຳຄັນຕ່າງໆຂອງຊາດ-ສາກົນ ໃຫ້ໄດ້ 36% ຂຶ້ນໄປ.

**3.2 ຄາດໝາຍຂະແໜງສາທາລະນະສຸກ: ມີ 11 ຕົວຊີ້ວັດ**

- ອັດຕາເດັກນ້ອຍລຸ່ມ 5 ປີ ທີ່ມີນ້ຳໜັກຕ່ຳກວ່າມາດຕະຖານ ໃຫ້ຕ່ຳກວ່າ 11% ຂອງຈຳນວນເດັກທີ່ມາຕິດຕາມທັງໝົດ;
- ອັດຕາເດັກນ້ອຍລຸ່ມ 5 ປີທີ່ມີລວງສູງບໍ່ໄດ້ມາດຕະຖານ ໃຫ້ຕ່ຳກວ່າ 10% ຂອງຈຳນວນເດັກທີ່ມາຕິດຕາມທັງໝົດ;
- ອັດຕາການຕາຍຂອງເດັກລຸ່ມ 1 ປີ ໃຫ້ຕ່ຳກວ່າ 7,8/1.000 ຂອງເດັກເກີດມີຊີວິດ;
- ອັດຕາການຕາຍຂອງເດັກລຸ່ມ 5 ປີ ໃຫ້ຕ່ຳກວ່າ 9,1/1.000 ຂອງເດັກເກີດມີຊີວິດ;
- ອັດຕາສ່ວນການຕາຍຂອງແມ່ ໃຫ້ຕ່ຳກວ່າ 65/100.000 ຂອງເດັກເກີດມີຊີວິດ;
- ອັດຕາການເກີດລູກມີແພດຊ່ວຍ ໃຫ້ໄດ້ຫຼາຍກວ່າ 79,3% ຂອງແມ່ມານເປົ້າໝາຍ;
- ອັດຕາການສັກຢາວັກຊີນກັນພະຍາດໃນເດັກລຸ່ມ 1 ປີ ໃຫ້ໄດ້ຫຼາຍກວ່າ 95% ຂອງເດັກເປົ້າໝາຍ;
- ອັດຕາການຊົມໃຊ້ນ້ຳສະອາດ ໃຫ້ໄດ້ຫຼາຍກວ່າ 94,8% ຂອງຈຳນວນປະຊາກອນ;
- ອັດຕາການຊົມໃຊ້ວິດຖ່າຍ ໃຫ້ໄດ້ຫຼາຍກວ່າ 97% ຂອງຈຳນວນຄອບຄົວທັງໝົດ;
- ອັດຕາການປົກຄຸມປະກັນສຸຂະພາບ ກວມເອົາ 100% ຂອງຈຳນວນປະຊາກອນ;
- ອັດຕາການຮັບຮອງ ແລະ ປະກາດບ້ານສາທາລະນະສຸກແບບຢ່າງ ໃຫ້ໄດ້ຫຼາຍກວ່າ 93,1% ຂອງຈຳນວນບ້ານທັງໝົດ.

**3.3 ຄາດໝາຍຂະແໜງແຮງງານ ແລະ ສະຫວັດດີການ-ສັງຄົມ**

- ຝຶກ ແລະ ພັດທະນາສີມືແຮງງານ ໃຫ້ໄດ້ 340 ຄົນ;
- ຈັດຫາວຽກເຮັດງານທຳ ໃຫ້ໄດ້ 2.237 ຄົນ;
- ສ້າງບ້ານພັດທະນາດ້ານແຮງງານ ແລະ ສະຫວັດດີການສັງຄົມ ໃຫ້ໄດ້ 70 ບ້ານ;
- ຂະຫຍາຍອັດຕາການປົກຄຸມຂອງລະບົບປະກັນສັງຄົມ ໃຫ້ໄດ້ 1.000 ຄົນ;
- ປະຕິບັດນະໂຍບາຍ ຕາມດຳລັດ 272/ລບ ໃຫ້ໄດ້ 288 ທ່ານ;
- ຂະຫຍາຍຄະນະກຳມະການປ້ອງກັນ ແລະ ຄວບຄຸມໄພພິບັດຂັ້ນບ້ານ ໃຫ້ໄດ້ 25 ບ້ານ;
- ຂະຫຍາຍຕາໜ່າງປົກປ້ອງເດັກຂັ້ນບ້ານ ໃຫ້ໄດ້ 25 ບ້ານ;
- ລະດົມທຶນເຂົ້າໃນກອງທຶນແຮຊ່ວຍເຫຼືອສຸກເສີນຜູ້ປະສົບໄພພິບັດ ໃຫ້ໄດ້ 600 ລ້ານກີບ;
- ຮັບບໍລິຈາກເລືອດ ໃຫ້ໄດ້ 2,800 ຖົງ.

**3.4 ຄາດໝາຍຂະແໜງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ**

- ເຄື່ອນໄຫວເກັບກຳຂ່າວ ແລະ ຜະລິດຂ່າວ ໃຫ້ໄດ້ 3.000 ຂ່າວ;
- ສ້າງຄອບຄົວວັດທະນະທຳ ໃຫ້ໄດ້ 1.500 ຄອບຄົວ;
- ສ້າງບ້ານວັດທະນະທຳໃໝ່ ໃຫ້ໄດ້ 9 ບ້ານ;
- ສ້າງກົມກອງວັດທະນະທຳ ໃຫ້ໄດ້ 60 ກົມກອງ;

- ສ້າງບ້ານວັດທະນະທຳແບບຢ່າງຍືນຍົງຕິດພັນກັບການທ່ອງທ່ຽວ ໃຫ້ໄດ້ 1 ບ້ານ;
- ພັດທະນາແຫຼ່ງທ່ອງທ່ຽວທີ່ເປັນບຸລິມະສິດ ໃຫ້ໄດ້ 1 ແຫ່ງ;
- ດຶງດູດນັກທ່ອງທ່ຽວເຂົ້າມາແຂວງໄຊຍະບູລີ ໃຫ້ໄດ້ 87.000 ຄົນ ແລະ ສ້າງລາຍຮັບຈາກການທ່ອງທ່ຽວໃຫ້ໄດ້ 2.2 ລ້ານໂດລາສະຫະລັດ.

**3.5 ຄາດໝາຍດ້ານການພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກ**

- ສ້າງບ້ານໃຫຍ່ໃຫ້ກາຍເປັນຕົວເມືອງນ້ອຍໃນຊົນນະບົດ ໃຫ້ໄດ້ 1 ຈຸດ;
- ສ້າງບ້ານພັດທະນາ ໃຫ້ໄດ້ 30 ບ້ານ ແລະ ຄອບຄົວພັດທະນາ ໃຫ້ໄດ້ 1.000 ຄອບຄົວ;
- ສ້າງເມືອງພົ້ນທຸກ ໃຫ້ໄດ້ 1 ເມືອງ, ບ້ານພົ້ນທຸກ ໃຫ້ໄດ້ 8 ບ້ານ;
- ສ້າງຄອບຄົວພົ້ນທຸກ ໃຫ້ໄດ້ 732 ຄອບຄົວ;
- ສົ່ງເສີມສ້າງກຸ່ມຜະລິດກະສິກຳໃຫ້ໄດ້ 71 ກຸ່ມ ແລະ ສ້າງບ້ານແບບຢ່າງທາງດ້ານກະສິກຳ ແລະ ປ່າໄມ້ໃຫ້ໄດ້ 65 ບ້ານ.

**ມາດຕາ 3 ຮັບຮອງເອົາມາດຕະການຈັດຕັ້ງປະຕິບັດ ແຜນພັດທະນາເສດຖະກິດ-ສັງຄົມຂອງແຂວງ ປີ 2022**

ກອງປະຊຸມເຫັນດີເປັນເອກະພາບຮັບຮອງເອົາມາດຕະການ ຕາມການສະເໜີຂອງອົງການປົກຄອງແຂວງ; ເພື່ອຮັບປະກັນໃຫ້ແກ່ການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມຂອງແຂວງ ປະຈຳປີ 2022 ໃຫ້ບັນລຸຕາມຄາດໝາຍທີ່ວາງໄວ້, ກອງປະຊຸມສະເໜີໃຫ້ອົງການປົກຄອງແຂວງ ເອົາໃຈໃສ່ຈັດຕັ້ງປະຕິບັດບາງມາດຕະການເພີ່ມເຕີມ ດັ່ງນີ້:

1) ກຳນົດນະໂຍບາຍ ແລະ ມາດຕະການດ້ານເສດຖະກິດທີ່ຈະແຈ້ງ ເພື່ອສົ່ງເສີມຂະແໜງການຜະລິດ ແລະ ການບໍລິການທີ່ມີທ່າແຮງໄດ້ປຽບແທ້ ແລະ ມີຕະຫລາດຮອງຮັບຢູ່ພາຍໃນ ແລະ ຕ່າງປະເທດທີ່ແນ່ນອນ, ລົງທຶນໄລຍະສັ້ນ ໄດ້ຮັບຜົນໄວ, ຕິດພັນກັບການນຳໃຊ້ເສັ້ນທາງລົດໄຟ ເລີ່ມແຕ່ປີ 2022 ໃຫ້ເກີດຜົນປະໂຫຍດສູງສຸດ;
2) ກຳນົດແຜນການນຳໃຊ້ງົບປະມານທີ່ມີຢູ່ຢ່າງຈຳກັດ ໃຫ້ສາມາດຕອບສະໜອງຄວາມຕ້ອງການ ແຜນພັດທະນາເສດຖະກິດຂອງຂະແໜງການ ແລະ ເປົ້າໝາຍການນຳໃຊ້ອື່ນໆ ໃຫ້ມີປະສິດທິພາບ ແລະ ປະສິດທິຜົນສູງ ຮັບປະກັນການກະຕຸ້ນການເຕີບໂຕເສດຖະກິດ ໄປຄຽງຄູ່ກັບການຮັກສາສະຖຽນລະພາບດ້ານເສດຖະກິດມະຫາພາກໃຫ້ມີຄວາມໝັ້ນທ່ຽງ ເປັນຕົ້ນແມ່ນການຄຸ້ມຄອງລາຄາສິນຄ້າ ໃຫ້ຢູ່ໃນລະດັບປົກກະຕິ;
3) ສືບຕໍ່ຜັນຂະຫຍາຍບັນດາມາດຕະການທີ່ໄດ້ກຳນົດໄວ້ໃນວາລະແຫ່ງຊາດ ໃຫ້ມີປະສິດທິຜົນ ໂດຍສະເພາະການແກ້ໄຂໜີ້ສິນ ໃນລະບົບຄັງເງິນ, ການຈັດເກັບລາຍຮັບ ແລະ ການແກ້ໄຂບັນຫາຢາເສບຕິດຢູ່ພາຍໃນແຂວງ ໃຫ້ຫຼຸດຜ່ອນລົງເທື່ອລະກ້າວ;
4) ຊຸກຍູ້ສົ່ງເສີມການຜະລິດສະບຽງອາຫານຢ່າງແຂງແຮງ ເພື່ອຕອບສະໜອງໃຫ້ແກ່ຕະຫຼາດການທ່ອງທ່ຽວພາຍຫຼັງເປີດປະເທດຢ່າງເປັນທາງການ, ຍູ້ແຮງການຜະລິດພາຍໃນ ເພື່ອທົດແທນການນຳເຂົ້າ, ພ້ອມທັງຊຸກຍູ້ສົ່ງເສີມອຸດສາຫະກຳປຸງແຕ່ງຜົນຜະລິດກະສິກຳ ດ້ວຍການຫັນເປັນທັນສະໄໝ, ສົ່ງເສີມໃຫ້ມີສ່ວນຮ່ວມໃນຂອບສັນຍາຂອງລັດຖະບານລາວ ກັບ ຕ່າງປະເທດ ເປັນຕົ້ນແມ່ນ ສົ່ງອອກ: ເຂົ້າ, ຊີ້ນ ແລະ ພືດຕ່າງໆ;
5) ພິຈາລະນາຄືນໂຄງປະກອບການຈັດສັນງົບປະມານການລົງທຶນເຂົ້າໃນຂົງເຂດເສດຖະກິດ ແລະ ຂົງເຂດວັດທະນະທຳ-ສັງຄົມຢ່າງເໝາະສົມ ເພື່ອໃຫ້ສາມາດຈັດຕັ້ງປະຕິບັດບັນດາຄາດໝາຍທີ່ກຳນົດໄວ້;

6) ສືບຕໍ່ ປະຕິບັດມາດຕະການປ້ອງກັນ, ຄວບຄຸມ ພະຍາດຕາມລະດູການ ໃຫ້ທັນການທົ່ວເຖິງ ແລະ ສັກຢາວັກ ຊີນປ້ອງກັນພະຍາດ ໂຄວິດ-19 ໃຫ້ໄດ້ຫຼາຍກວ່າ 70%;

7) ຕິດຕາມກວດກາການຈັດຕັ້ງປະຕິບັດກົດໝາຍ ແລະ ການຜັນຂະຫຍາຍມາດຕາຂອງກົດໝາຍ ອອກເປັນ ນິຕິກໍາໃຕ້ກົດໝາຍ ໃນຂົງເຂດບໍລິຫານລັດ;

8) ສ້າງຄວາມເຂັ້ມແຂງຂອງລະບົບສະຖິຕິຂອງແຂວງ ແລະ ຂອງຂະແໜງການໃຫ້ມີຂໍ້ມູນຊັດເຈນ, ສະໜອງທັນ ເວລາ, ເພື່ອຮັບໃຊ້ການຕິດຕາມປະເມີນຜົນ ການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມຂອງ ແຂວງ ໃນແຕ່ລະດ້ານໃຫ້ສອດຄ່ອງກັບສະພາບເສດຖະກິດ-ສັງຄົມຕົວຈິງ.

**ມາດຕາ 4 ການຈັດຕັ້ງປະຕິບັດ**

1. ມອບໃຫ້ ອົງການປົກຄອງແຂວງ ຊີ້ນໍາບັນດາພະແນກການຂອງແຂວງ ແລະ ອົງການປົກຄອງເມືອງ ຈັດຕັ້ງປະຕິບັດມະຕິສະບັບນີ້ ຢ່າງເຂັ້ມງວດ;
2. ມອບໃຫ້ ຄະນະປະຈໍາສະພາປະຊາຊົນແຂວງ, ຄະນະສະມາຊິກສະພາແຫ່ງຊາດ ປະຈໍາເຂດເລືອກຕັ້ງທີ 7, ບັນດາຄະນະກໍາມະການ ແລະ ສະມາຊິກສະພາປະຊາຊົນແຂວງ ປະຈໍາເຂດເລືອກຕັ້ງເມືອງ ສືບຕໍ່ຊຸກຍູ້ ແລະ ດໍາເນີນການຕິດຕາມກວດກາ ການຈັດຕັ້ງປະຕິບັດ ມະຕິສະບັບນີ້ ຕາມພາລະບົດບາດ, ຂອບເຂດສິດ ແລະ ໜ້າທີ່ຂອງຕົນ ຢ່າງເຂັ້ມງວດ.

**ມາດຕາ 5 ຜົນສັກສິດ**

ມະຕິສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

**ປະທານສະພາປະຊາຊົນແຂວງ**

ເພັງນິລັນ ຄໍາພັນເພັງ